# ວິທີການລົງຄະແນນສຽງ

**VOTE 2025**

*ການລົງຄະແນນຂອງທ່ານແມ່ນສຽງຂອງທ່ານ - ຈົດທະບຽນ, ໄດ້ຮັບການແຈ້ງໃຫ້ຊາບ, ໄປລົງຄະແນນສຽງ!*

## ຜູ້ໃດສາມາດລົງຄະແນນສຽງ?

ການຈະລົງຄະແນນສຽງໃນລັດມິນນີໂຊຕາ ທ່ານຈະຕ້ອງເປັນພົນລະເມືອງຂອງສະຫະລັດອະເມລິກາ, ມີອາຍຸຢ່າງນ້ອຍ 18 ປີໃນວັນເລືອກຕັ້ງ, ແລະອາໄສຢູ່ໃນລັດມິນນີໂຊຕາຢ່າງນ້ອຍ 20 ວັນ

ຖ້າທ່ານຖືກຕັດສິນໂທດຄະດີອາຍາ, ທ່ານກໍ່ຍັງສາມາດລົງຄະແນນສຽງໄດ້ ຖ້າທ່ານຍັງບໍ່ໄດ້ຖືກຄຸມຂັງຍ້ອນການກະທຳຜິດທາງອາຍາ.

ທ່ານສາມາດລົງຄະແນນສຽງໃນຂະນະທີ່ຢູ່ພາຍໃຕ້ການປົກຄອງຜູ້ອື່ນໄດ້ ເວັ້ນເສຍແຕ່ວ່າຜູ້ພິພາກສາໄດ້ຍົກເລີກສິດທິໃນການລົງຄະແນນສຽງຂອງທ່ານ

## ວັນທີຂອງປີ 2025

**ການເລືອກຕັ້ງຂັ້ນຕົ້ນ**

*ວັນອັງຄານ, ວັນທີ 12 ສິງຫາ*

**ລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**

*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 19 ກັນຍາ ເຖິງ 3 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**

*ລົງທະບຽນລ່ວງໜ້າ ພາຍໃນວັນທີ 14 ຕຸລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**

*ວັນອັງຄານ ວັນທີ4ເດືອນພຶດສະຈິກາ*

## ລົງທະບຽນເພື່ອລົງຄະແນນສຽງ

ທ່ານຕ້ອງລົງທະບຽນເພື່ອລົງຄະແນນສຽງຕາມທີ່ຢູ່ປັດຈຸບັນຂອງທ່ານ ຖ້າຈະລົງທະບຽນຫຼືປັບປຸງການຈົດທະບຽນຂອງທ່ານ ໃຫ້ໄປທີ່ mnvotes.gov

ນອກນັ້ນທ່ານຍັງສາມາດລົງທະບຽນທີ່ສະຖານທີ່ບ່ອນບັດຂອງທ່ານໃນວັນເລືອກຕັ້ງ ທ່ານຕ້ອງສະແດງຫຼັກຖານຊື່ແລະທີ່ຢູ່ໃນປັດຈຸບັນຂອງທ່ານ ສຳລັບລາຍລະອຽດເພີ່ມເຕີມ ໃຫ້ໄປທີ່ mnvotes.gov ຫຼື ໂທ 1-877-600-VOTE

## ເບິ່ງບັດລົງຄະແນນສຽງຕົວຢ່າງຂອງທ່ານ

ເຂົ້າໄປເບິ່ງຜູ້ສະໝັກແລະຄຳຖາມທີ່ຈະຢູ່ໃນບັດລົງຄະແນນສຽງຂອງທ່ານ ໄປທີ່ mnvotes.gov

ມີຕໍ່ຂ້າງຫລັງ...

# ວິທີການລົງຄະແນນສຽງ

VOTE 2025

...ສືບຕໍ່ຈາກຂ້າງໜ້າ

## *ສະຖານທີ່ລົງຄະແນນສຽງແລະເວລາ*

ຊອກຫາບ່ອນທີ່ທ່ານລົງຄະແນນສຽງ ໄປທີ່ mnvotes.gov ສະຖານທີ່ເລືອກຕັ້ງສ່ວນຫຼາຍເປີດແຕ່ 7 ໂມງເຊົ້າເຖິງ 8 ໂມງແລງ

## *ສິ່ງທີ່ຕ້ອງເອົາໄປນຳ*

ຖ້າວ່າທ່ານໄດ້ລົງທະບຽນເພື່ອລົງຄະແນນສຽງຢູ່ບ່ອນຢູ່ປັດຈຸບັນຂອງທ່ານ ທ່ານບໍ່ຈຳເປັນຕ້ອງເອົາບັດປະຈຳໂຕມານຳ ຖ້າຫາກວ່າທ່ານຕ້ອງການລົງທະບຽນຫຼືປັບປຸງການຈົດທະບຽນຂອງທ່ານ ທ່ານຈະຕ້ອງໄດ້ສະແດງຫຼັກຖານທີ່ຢູ່ອາໄສຂອງທ່ານໃຫ້ເຫັນກ່ອນທີ່ທ່ານຈະລົງຄະແນນສຽງ ເພື່ອຮຽນຮູ້ເພີ່ມເຕີມ ໃຫ້ໄປທີ່ mnvotes.gov ຫຼື ໂທ 1-877-600-VOTE

## *ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

ທ່ານສາມາດລົງຄະແນນສຽງແຕ່ທຳອິດໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ ວັນສຸກ ວັນທີ 19 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ສົ່ງໃຫ້ທ່ານທາງໄປສະນີໄດ້ ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຫຼືຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ໄປທີ່ mnvotes.gov

### *ຢຸດເຮັດວຽກເພື່ອໄປລົງຄະແນນສຽງ*

*ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*

*mnvotes.gov • 1-877-600-VOTE*